# ຄໍາຮ້ອງສະໝັກລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້

**ສະໝັກທາງອອນລາຍທີ່ http://www.mnvotes.org** *-ຫຼື-*

**ກອກຂໍ້ມູນໃນລາຍການທີ່ 1 ເຖິງ 7 ຂ້າງລຸ່ມນີ້ໃຫ້ສົມບູນ ກະລຸນາຂຽນໃຫ້ແຈ້ງ**

ສົ່ງຄືນຄໍາຮ້ອງສະໝັກນີ້ໃຫ້ໄວທີ່ສຸດເທົ່າທີ່ເປັນໄປໄດ້ ຕ້ອງສົ່ງຄືນບັດລົງຄະແນນກ່ອນວັນເລືອກຕັ້ງເພື່ອຈະຖືກນັບ

**ອັນສໍາຄັນ:** ທະຫານທີ່ປະຈໍາການໃນໜ້າທີ່ແລະຜູ້ລົງຄະແນນທີ່ຢູ່ຕ່າງປະເທດບໍ່ຕ້ອງໃຊ້ຄໍາຮ້ອງສະໝັກນີ້ ເບິ່ງອີກດ້ານໜຶ່ງສໍາລັບຂໍ້ມູນເພີ່ມເຕີມ

**1.** ບັດລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ທີ່ຮ້ອງຂໍສໍາລັບໃຊ້ໃນການເລືອກຕັ້ງດັ່ງຕໍ່ໄປນີ້ *(ຖ້າຫາກວ່າບໍ່ໄດ້ເລືອກວ່າຈະເອົາການເລືອກຕັ້ງໃດ ບັດລົງຄະແນນສຽງຈະຖືກສົ່ງໃຫ້ໃຊ້ສໍາລັບການເລືອກຕັ້ງເທື່ອໜ້າເທົ່ານັ້ນ)*

ການເລືອກຕັ້ງຂັ້ນຕົ້ນແລະການເລືອກຕັ້ງທົ່ວໄປທັງສອງອັນ
ການເລືອກຕັ້ງຂັ້ນຕົ້ນເທົ່ານັ້ນ
ການເລືອກຕັ້ງທົ່ວໄປເທົ່ານັ້ນ
ການເລືອກຕັ້ງຂັ້ນຕົ້ນຈະນິດພິເສດ - ລະບຸວັນ:
ການເລືອກຕັ້ງຈະນິດພິເສດ - ລະບຸວັນ:

**2.** ນາມສະກຸນຫຼືຊື່ນາມສະກຸນ | ຊື່ | ຊື່ກາງ | ຊື່ຕໍ່ທ້າຍ

**3.** ວັນເດືອນປີເກີດ (ເດືອນ/ວັນທີ/ປີ) | ຄາວຕີ້ທີ່ທ່ານອາໄສຢູ່ | ເບີໂທລະສັບ - -

ອີເມວ

**4.** ໝາຍຊ້ອງທັງໝົດທີ່ກ່ຽວຂ້ອງ

ຂ້າພະເຈົ້າມີໃບຂັບຂີ່ທີ່ລັດມິນນີໂຊຕາອອກໃຫ້ ຫຼືບັດປະຈໍາຕົວຂອງລັດມິນນີໂຊຕາແມ່ນເລກທີ່:
ຂ້າພະເຈົ້າມີເລກປະກັນສັງຄົມ ເລກສີ່ໂຕສຸດທ້າຍແມ່ນ: XXX-XX-
ຂ້າພະເຈົ້າບໍ່ມີໃບຂັບຂີ່ທີ່ລັດມິນນີໂຊຕາອອກໃຫ້, ບັດປະຈໍາຕົວຂອງລັດມິນນີໂຊຕາຫຼືເລກປະກັນສັງຄົມ

ເລກປະຈໍາຕົວຂອງທ່ານ ຈະຖືກປຽບທຽບໃສ່ເລກປະຈໍາຕົວໃນຊອງຈົດໝາຍບັດລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ຂອງທ່ານ

**5.** ທີ່ຢູ່ຂອງທ່ານ (ບ່ອນຢູ່) | ອາພາດເມັນ | ເມືອງ | **MN** | ລະຫັດໄປສະນີ

**6.** ທີ່ຢູ່ບ່ອນທີ່ບັດລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ຂອງທ່ານຄວນຈະຖືກສົ່ງໄປ | ອາພາດເມັນ | ເມືອງ | ລັດ | ລະຫັດໄປສະນີ

**7.** ຂ້າພະເຈົ້າຂໍຢັ້ງຢືນວ່າຂ້າພະເຈົ້າ:

- ກອກຄໍາຮ້ອງສະໝັກນີ້ສໍາເລັດໂດຍຂ້າພະເຈົ້າເອງ;
- ຈະມີອາຍຸຢ່າງນ້ອຍ 18 ປີໃນວັນເລືອກຕັ້ງ;
- ເປັນພົນລະເມືອງຂອງສະຫະລັດອະເມລິກາ;
- ຈະໄດ້ອາໄສຢູ່ໃນລັດມິນນີໂຊຕາ 20 ມື້ກ່ອນວັນເລືອກຕັ້ງ;
- ຍັງຢູ່ທີ່ຢູ່ທີ່ໃຫ້ໄວ້ໃນແບບຄໍາຮ້ອງສະໝັກນີ້;
- ບໍ່ໄດ້ຢູ່ພາຍໃຕ້ການປົກຄອງຕາມຄໍາສັ່ງສານທີ່ສານສັ່ງຍົກເລີກສິດທິລົງຄະແນນສຽງຂອງຂ້າພະເຈົ້າ;
- ຍັງບໍ່ທັນໄດ້ຖືກຄໍາສັ່ງສານໃຫ້ເປັນຄົນໄຮ້ຄວາມສາມາດຕາມກົດໝາຍທີ່ຈະລົງຄະແນນສຽງ;
- ມີສິດທິລົງຄະແນນສຽງເພາະວ່າ, ຖ້າວ່າຂ້າພະເຈົ້າໄດ້ຮັບການຕັດສິນໂທດຈາກຄວາມຜິດຮ້າຍແຮງ, ຄໍາຕັດສິນໂທດຮ້າຍແຮງທາງອາຍາຂອງຂ້າພະເຈົ້າໄດ້ໝົດອາຍຸແລ້ວ (ໄດ້ສໍາເລັດສົມບູນແລ້ວ) ຫຼື ຂ້າພະເຈົ້າໄດ້ຮັບການປ່ອຍຈາກການຕັດສິນໂທດຂອງຂ້າພະເຈົ້າ;
- ໄດ້ອ່ານແລະໄດ້ເຂົ້າໃຈຂໍ້ຄວາມນີ້: ຂໍ້ມູນຂ້າງເທິງນີ້ແມ່ນຖືກຕ້ອງ, ແລະ ຂ້າພະເຈົ້າເຊັນຊື່ລົງນາມແບບຟອມຄໍາຮ້ອງສະໝັກນີ້ພາຍໃຕ້ກົດໝາຍການລົງໂທດການຕົວະ, ພາຍໃຕ້ໂທດຮ້າຍແຮງທີ່ຈະຖືກຈໍາຄຸກໄດ້ບໍ່ເກີນ 5 ປີ, ມີການປັບ ໃໝບໍ່ເກີນ $10,000, ຫຼືທັງສອງ

**ເຊັນຊື່ຢູ່ບ່ອນນີ້: X**________________________________ **ລົງວັນທີ** ____/____/____

**ເບິ່ງອີກດ້ານໜຶ່ງສໍາລັບຄໍາແນະນໍາພິເສດສໍາລັບການຜູ້ລົງຄະແນນທີ່ມີຄວາມພິການຫຼືມີໜັງສືມອບອໍານາດຂອງທະນາຍຄວາມ**

official use only

| | | | | |
|---|---|---|---|---|
| Primary → ☐ reg ☐ non-reg | received date | ballot issued date | initials | type M C HCF |
| General → ☐ reg ☐ non-reg | received date | ballot issued date | initials | type M C HCF |

| | |
|---|---|
| reason replaced ☐ rejected ☐ lost ☐ spoiled ☐ never received | repl. date: |
| reason replaced ☐ rejected ☐ lost ☐ spoiled ☐ never received | repl. date: |

| |
|---|
| precinct |
| school district |

## ສົ່ງກັບຄືນຄໍາຮ້ອງສະໝັກນີ້ໃຫ້ໄວທີ່ສຸດເທົ່າທີ່ເປັນໄປໄດ້ທີ່:

Ramsey County Elections
PO Box 64098
Saint Paul, MN 55164

**ສົ່ງກັບຄືນຄໍາຮ້ອງສະໝັກຂອງທ່ານຢູ່ໃສ**
ທ່ານຄວນສົ່ງກັບຄືນຄໍາຮ້ອງສະໝັກນີ້ໄປທີ່ຫ້ອງການເລືອກຕັ້ງທ້ອງຖິ່ນຂອງທ່ານ ຖ້າຫາກວ່າບໍ່ໄດ້ໃຫ້ໄວ້ຂ້າງເທິງ, ທ່ານສາມາດຫາຂໍ້ມູນຕິດຕໍ່ພະນັກງານຫ້ອງການເລືອກຕັ້ງທ້ອງຖິ່ນໄດ້ທີ່ "ລາຍຊື່ພະນັກງານເລືອກຕັ້ງ" ທີ່ http://www.mnvotes.org.

**ທາງເລືອກສໍາລັບການສົ່ງກັບຄືນ**
ຄໍາຮ້ອງສະໝັກລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ ສໍາລັບການເລືອກຕັ້ງຂອງລັດຖະບານກາງ, ຂອງລັດຫຼືຂອງຄາວຕີ, ສົ່ງຄໍາຮ້ອງສະໝັກລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ທາງອອນລາຍທີ່ http://www.mnvotes.org.-ຫຼື- ເອົາຄໍາຮ້ອງສະໝັກລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ ໃຫ້ສົ່ງກັບຄືນທາງໄປສະນີ ແຟັກສ໌ ຫຼື ສົ່ງກັບຄືນແມ່ນເອກກະສານສະແກນຕິດກັບອີເມວ

**ເມື່ອໃດທີ່ບັດລົງຄະແນນຂອງທ່ານຈະຖືກສົ່ງໄປ**
ເອກກະສານລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ ຂອງທ່ານຈະຖືກສົ່ງໄປເຖິງທ່ານໃນເວລາຢ່າງນ້ອຍ **46** ວັນກ່ອນການເລືອກຕັ້ງ (ບໍ່ລວມເອົາການເລືອກຕັ້ງຂອງເມືອງທີ່ຈັດຂຶ້ນໃນເດືອນມີນາ ທີ່ເອກກະສານຈະສົ່ງໄປ **30** ວັນກ່ອນການເລືອກຕັ້ງ) ຖ້າຫາກວ່າທ່ານສະໝັກຫຼັງຈາກວັນນີ້ ບັດລົງຄະແນນຂອງທ່ານຈະຖືກສົ່ງໄປໃນເວລາທີ່ຄໍາຮ້ອງສະໝັກໄດ້ຮັບ ຕິດຕໍ່ ຫ້ອງການເລືອກຕັ້ງທ້ອງຖິ່ນຂອງທ່ານ ຖ້າຫາກວ່າທ່ານຍັງບໍ່ໄດ້ຮັບບັດລົງຄະແນນຂອງທ່ານ ກວດກາເບິ່ງສະຖານະພາບຂອງບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ຂອງທ່ານທີ່ http://www.mnvotes.org.

**ແຈ້ງການຄວາມເປັນສ່ວນຕົວ**
ວັນເດືອນປີເກີດຂອງທ່ານ, ອີເມວ, ແລະເລກປະຈໍາຕົວໃດໆທີ່ທ່ານໃຫ້ໄວ້ (ໃບຂັບຂີ່ຂອງລັດມິນນີໂຊຕາ, ບັດປະຈໍາຕົວຂອງລັດຫຼືເລກປະກັນສັງຄົມສີ່ໂຕສຸດທ້າຍ) ເປັນຂໍ້ມູນສ່ວນຕົວ ມີພຽງແຕ່ພະນັກງານການເລືອກຕັ້ງເທົ່ານັ້ນຈະເຂົ້າໄປເບິ່ງໄດ້

ພະນັກງານການເລືອກຕັ້ງຖາມຫາວັນເດືອນປີເກີດຂອງທ່ານເພື່ອວ່າເຂົາເຈົ້າຈະປຽບທຽບຄໍາຮ້ອງສະໝັກຂອງທ່ານໃສ່ກັບບັນທຶກຜູ້ມີສິດທີ່ເລືອກຕັ້ງ ຖ້າຫາກວ່າທ່ານປະຕິເສດທີ່ຈະໃຫ້ວັນເດືອນປີເກີດຂອງທ່ານ, ທ່ານຈະບໍ່ໄດ້ບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້

ພະນັກງານການເລືອກຕັ້ງຖາມຫາອີເມວຂອງທ່ານເພື່ອວ່າເຂົາເຈົ້າຈະໄດ້ຕິດຕໍ່ທ່ານກ່ຽວກັບຄໍາຮ້ອງສະໝັກຂອງທ່ານ ຫ້ອງການລັດຖະມົນຕີຂອງລັດອາດຈະສົ່ງອີເມວຫາທ່ານ (ຫຼືຕິດຕໍ່ທ່ານດ້ວຍວິທີການອື່ນ) ກ່ຽວກັບການລົງຄະແນນສຽງແລະການເລືອກຕັ້ງ, ຫຼືຖາມຄວາມຄິດເຫັນຂອງທ່ານເປັນສາທາລະນະກ່ຽວກັບການເລືອກຕັ້ງ ຖ້າວ່າທ່ານປະຕິເສດທີ່ຈະໃຫ້ອີເມວຂອງທ່ານ, ທ່ານຈະບໍ່ສາມາດສະໝັກຂໍຮັບບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ທາງອອນລາຍແລະທ່ານຈະຕ້ອງສະໝັກຂໍເອົາບັດຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້

ພະນັກງານການເລືອກຕັ້ງຖາມຫາເລກປະຈໍາຕົວຂອງທ່ານເພື່ອກວດສອບວ່າຜູ້ລົງຄະແນນເລືອກຕັ້ງແມ່ນຜູ້ດຽວກັນກັບຜູ້ສະໝັກ ຖ້າຫາກວ່າທ່ານປະຕິເສດທີ່ຈະໃຫ້ເລກປະຈໍາຕົວຂອງທ່ານ, ບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ອາດຈະຖືກປະຕິເສດແລະທ່ານຈະບໍ່ສາມາດກວດກາເບິ່ງສະຖານະພາບຂອງບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ຂອງທ່ານທາງອອນລາຍ

ຂໍ້ມູນສ່ວນທີ່ເຫຼືອໃນຄໍາຮ້ອງສະໝັກຂອງທ່ານແມ່ນຂໍ້ມູນສາທາລະນະໃນເວລາທີ່ນໍາໃຊ້ໃນການເລືອກຕັ້ງ, ທາງດ້ານການເມືອງ ຫຼືເພື່ອວັດຖຸປະສົງໃນການບັງຄັບໃຊ້ກົດໝາຍ ຖ້າຫາກວ່າທ່ານຕ້ອງການທີ່ຈະຮັກສາຂໍ້ມູນສ່ວນຕົວຂອງທ່ານໃຫ້ເປັນສ່ວນຕົວ ເນື່ອງຈາກວ່າມີຄວາມກັງວົນດ້ານຄວາມປອດໄພສ່ວນບຸກຄົນ ໃຫ້ໂທຫາ 1-877-600-8683 ເພື່ອທີ່ຈະຮຽນຮູ້ວ່າທ່ານຈະສາມາດເຮັດອັນໃດໄດ້

**ຜູ້ໃດຈະສະໝັກຂໍບັດລົງຄະແນນສຽງໄດ້**
ແຕ່ລະຄົນຕ້ອງໄດ້ສະໝັກໃຫ້ແຕ່ຕົນເອງໄດ້ເທົ່ານັ້ນ ມັນເປັນການຜິດກົດໝາຍຮ້າຍແຮງຖ້າຈະໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ ໃນຄໍາຮ້ອງສະໝັກຂໍບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້, ພະຍາຍາມທີ່ຈະລົງຄະແນນສຽງໃນບັດລົງຄະແນນສຽງທີ່ຜິດກົດໝາຍ, ຫຼື ຊ່ວຍເຫຼືອໃຜຜູ້ໜຶ່ງລົງຄະແນນສຽງຢ່າງຜິດກົດໝາຍໃນບັດລົງຄະແນນສຽງ

**ຖ້າວ່າທ່ານຄິດວ່າທ່ານອາດຈະບໍ່ໄດ້ລົງທະບຽນເພື່ອລົງຄະແນນສຽງ**
ຖ້າວ່າທ່ານບໍ່ໄດ້ລົງທະບຽນຕາມທີ່ຢູ່ຕາມກົດໝາຍທີ່ໄດ້ໃຫ້ໄວ້ ພວກເຮົາຈະສົ່ງຄໍາຮ້ອງສະໝັກການລົງທະບຽນອອກສຽງເລືອກຕັ້ງພ້ອມກັບເອກກະສານບັດລົງຄະແນນໄປໃຫ້ທ່ານ.

**ຂໍ້ມູນສໍາລັບທະຫານທີ່ປະຈໍາການໃນໜ້າທີ່ແລະຜູ້ລົງຄະແນນທີ່ຢູ່ຕ່າງປະເທດ**
ຖ້າຫາກວ່າທ່ານສະໝັກຂໍບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ເພາະວ່າທ່ານຫຼືຄອບຄົວຂອງທ່ານແມ່ນທະຫານທີ່ປະຈໍາການໃນໜ້າທີ່ຫຼືເພາະວ່າທ່ານຈະໄປຢູ່ຕ່າງປະເທດ ແລະ/ຫຼື ຢູ່ນອກອານາເຂດຂອງສະຫະລັດອະເມລິກາ ຫ້າມໃຊ້ຄໍາຮ້ອງສະໝັກນີ້ ທ່ານມີສິດທີ່ຈະໄດ້ຮັບການປົກປ້ອງພິເສດ ຖ້າວ່າທ່ານສະໝັກໂດຍໃຊ້ຄໍາຮ້ອງສະໝັກ **Federal Postcard Application**(ຄໍາຮ້ອງໂພສກາດຂອງລັດຖະບານກາງ)**.** ສໍາລັບຂໍ້ມູນເພີ່ມເຕີມແລະສະໝັກທາງອອນລາຍນ໌ ໃຫ້ໄປທີ່ http://www.mnvotes.org.

**ທາງເລືອກສໍາລັບທ່ານຖ້າວ່າທ່ານມີຄວາມພິການ**
ທ່ານສາມາດ:

- ເຊັນຊື່ຄໍາຮ້ອງສະໝັກດ້ວຍຕົວທ່ານເອງ,
- ເຮັດໃຫ້ເຄື່ອງໝາຍຂອງທ່ານ, ຫຼື
- ຮ້ອງຂໍໃຫ້ບຸກຄົນອື່ນເຊັນຊື່ໃຫ້ທ່ານໂດຍມີທ່ານຢູ່ຊ້ອງໜ້າ (ໃຫ້ບຸກຄົນນັ້ນເຊັນຊື່ຂອງເຂົາເຈົ້າຄືກັນ)
- ຖ້າທ່ານໄດ້ໃຊ້ແນວຄໍ້າກາລາຍເຊັນເປັນລາຍເຊັນຂອງທ່ານ ທ່ານສາມາດໃຊ້ບັດລາຍເຊັນນັ້ນຫຼືຮ້ອງຂໍໃຫ້ບຸກຄົນອື່ນຊ່ວຍໃຊ້ບັດລາຍເຊັນຂອງທ່ານຊ້ອງໜ້າຂອງທ່ານ (ເບິ່ງກົດໝາຍມິນນີໂຊຕາສ່ວນທີ 645.44 ພາກຍ່ອຍທີ 14)

**ຂໍ້ມູນກ່ຽວກັບໜັງສືມອບອໍານາດຂອງທະນາຍຄວາມ**
ການລົງຄະແນນສຽງແມ່ນບໍ່ໄດ້ລວມໃສ່ໃນໜັງສືມອບອໍານາດຂອງທະນາຍຄວາມ ໜັງສືມອບອໍານາດຂອງທະນາຍຄວາມແມ່ນສະເພາະກ່ຽວກັບສົມບັດເທົ່ານັ້ນ ບຸກຄົນທີ່ມີຊື່ໃນໜັງສືມອບອໍານາດຂອງທະນາຍຄວາມສາມາດເຊັນຊື່ໃຫ້ທ່ານໂດຍຊ້ອງໜ້າທ່ານເທົ່ານັ້ນ, ດັ່ງທີ່ໄດ້ກ່າວໄວ້ຢູ່ຂ້າງເທິງ. (ເບິ່ງກົດໝາຍມິນນີໂຊຕາພາກທີ **523.24** ພາກຍ່ອຍທີ **14**)